rfa | ວິທຍຸເອເຊັຽເສຣີ

# ໂຄງການເຂື່ອນນໍ້າລອງ ຂ.ຫຼວງນໍ້າທາຄືບໜ້າ

ໂຄງການ ສ້າງ ເຂື່ອນ ນໍ້າລອງ ໃນແຂວງ ຫລວງນໍ້າທາ ຊຶ່ງ ໄດ້ລົງມື ການກໍ່ສ້າງ ແຕ່ເດືອນ ມີນາ ຜ່ານມາ ນີ້ນັ້ນ ມີການ ດໍາເນີນ ມາແດ່ແລ້ວ ປະມານ 10 ສ່ວນຮ້ອຍ.

**ທອາດ ສີມູນ**
2011.11.23



*ທັມມະຊາຕ ໄຮ່ນາ ໃນ ແຂວງຫຼວງນໍ້າທາ*

ກົດຟັງສຽງ

ການວາງຮາກຖານ ຕາຂ່າຍ ສົ່ງໄຟຟ້າ ພ້ອມກັບ ຫົນທາງ ເຂົ້າສູ່ເຂດ ການກໍ່ສ້າງ ກໍສຳເຣັຈ ໄປແລ້ວ ແລະ ຄາດວ່າຄົງ ຈະ ເຣີ່ມພາຄ ກໍ່ສ້າງເຂື່ອນ ຕົວຈິງໄດ້ ພາຍໃນ ເດືອນໜ້ານີ້. ດັ່ງເຈົ້າໜ້າທີ່ ຜູ້ຮັບ ຜິດຊອບ ໃນໂຄງການ ທ່ານໜຶ່ງ ໄດ້ ກ່າວວ່າ:

*"ກຳລັງ ເຮັດສາຍສົ່ງ ເປັນຕາຂ່າຍ ສາຍສົ່ງ ໄປຫາ ສະຖານທີ ກໍ່ສ້າງ ແລ້ວ ກໍເຮັດເສັ້ນທາງ ແຕ່ວ່າ ພາຄກໍ່ສ້າງ ຕົວຈິງ ເປັນຮາກຖານບໍ ຫລືວ່າຕົວເຂື່ອນ ກໍຍັງບໍ່ທັນ ໄດ້ເຣີ່ມ. ໃນ ປັຈຈຸບັນນີ້ ຂະເຈົ້າ ກຳລັງເອົາ ຊາຍນ້ຳຂອງ ຂຶ້ນມາ ກໍ່ສ້າງ ວຽກກໍ່ສ້າງນີ້ ກໍປະມານ 10 ເປີຣ໌ເຊັນຕ໌ ນີ້ແຫລະ".*

ພ້ອມດຽວກັນນີ້ ທ່ານກໍວ່າ ໂຄງການ ກໍ່ສ້າງເຂື່ອນ ດັ່ງກ່າວ ຢູ່ໃນເຂດ ເມືອງລອງ ເປັນ ເຂື່ອນ ຂນາດນ້ອຍ ທີ່ຈະສາ ມາຕ ຜລິຕກະແສ ໄຟຟ້າ ໄດ້ແຕ່ພຽງ 5 ເມກະວັຕ ເທົ່ານັ້ນ ສຳລັບໃຫ້ ບໍຣິການ ຢູ່ພາຍໃນ ປະເທສ ໂດຍແມ່ນ ບໍຣິສັທ ການກໍ່ສ້າງ ຫລວງປຣະເສີດ (Luang Praseuth Construction) ທີ່ໄດ້ຮັບ ສັມປະທານ ຈາກ ທາງ ຣັຖບາລລາວ ແລະກໍໄດ້ ດຳເນີນ ການສຳຣວຈ ວິຈັຍດ້ານ ຜົລກະທົບ ຕໍ່ສະພາບ ແວດລ້ອມ ແຕ່ປີ 2009 ຈົນຮອດ ມື້ວັນທີ່ 21 ມີນາ 2011 ຈຶ່ງມີການ ເຊັນສັນຍາ ການກໍ່ສ້າງ ຢ່າງເປັນ ທາງການ.

ເຈົ້າໜ້າທີ່ ທ່ານນີ້ໄດ້ ໃຫ້ການ ຊີ້ແຈງ ເພີ່ມວ່າ ການກໍ່ສ້າງ ເຂື່ອນ ນ້ຳລອງ ດັ່ງກ່າວ ກໍມີການ ຫລ້າຊ້າ ແດ່ນ້ອຍໜຶ່ງ ໃນ ຣະດູຝົນ ທີ່ເຮັດໃຫ້ ການດຳເນີນ ວຽກງານ ບໍ່ສະດວກ ພ້ອມຍັງຕ້ອງ ໄດ້ໂຍກຍ້າຍ ປະຊາຊົນ ຫລາຍຄອບຄົວ ໄປຢູ່ ໃນເຂດ ຈັດສັນ ບ່ອນໃໝ່ ແລະ ຄາດວ່າ ຄົງຈະສ້າງ ແລ້ວສຳເຣັຈ ພາຍໃນປີ 2013 ຕາມກຳໜົດ ທີ່ໄດ້ຕົກລົງ ກັນນັ້ນ.